ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 479 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 13 . 4 . 2020

ດ່ວນທີ່ສຸດ

## ແຈ້ງການ

ຮຽນ: - ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທົ່ວປະເທດ ທີ່ນັບຖື.

- ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ.

ເລື່ອງ: ຫ້າມເກັບເງິນຄ່າທຳນຽມຕ່າງໆ ໃນການອອກເອກະສານ ເຂົ້າ-ອອກ ເມືອງ ແລະ ບ້ານ ນຳປະຊາຊົນ.

- ອີງຕາມຄຳສັ່ງຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19.
- ອີງຕາມການສະເໜີ ຂອງກອງປະຊຸມຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນວັນທີ 11 ເມສາ 2020.
- ອີງຕາມການຕົກລົງ ແລະ ຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ໃນວັນທີ 11 ເມສາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳ ຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: ຫ້າມບໍ່ໃຫ້ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເກັບເງິນຄ່າທຳນຽມຕ່າງໆ ໃນການໃຫ້ບໍລິການອອກເອກະສານ ຫຼື ບັດເຂົ້າ-ອອກ ເມືອງ ແລະ ບ້ານ ນຳປະຊາຊົນ ໃນຊ່ວງໄລຍະຈັດຕັ້ງປະຕິບັດຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ຢ່າງເດັດຂາດ. ມອບໃຫ້ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ທົ່ວປະເທດ ຊີ້ນຳບັນດາທ່ານເຈົ້າເມືອງ ແລະ ນາຍບ້ານ ທີ່ຢູ່ໃນພາຍໃຕ້ການຊີ້ນຳຂອງຕົນ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ຖ້າເມືອງໃດ ຫລືບ້ານໃດ ໄດ້ຕົກລົງໃຫ້ມີການເກັບເງິນຄ່າອອກກະສານດັ່ງກ່າວ ແມ່ນໃຫ້ລົບລ້າງທັນທີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ
ລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ກະຊວງສາທາລະນະສຸກ | 01 ສະບັບ |
| 4. ຄະນະ ຫສນຍ ທ່ານລະ | 01 ສະບັບ |
| 5. ກົມກວດກາ, ຫສນຍ | 01 ສະບັບ |
| 6. ສຳເນົາ | 01 ສະບັບ |



สแกนด้วย CamScanner